# ໂຄງການຕຣວດວິຈັຍ
# ການໄດ້ຍິນສຽງຂອງເດັກເກີດໃໝ່



California
Newborn
Hearing
Screening
PROGRAM

State of California, Department of Health Services,
Children's Medical Services

## ໂຄງການຕຣວດວິຈັຍການໄດ້ຍິນສຽງຂອງທາຣົກ ເກີດໃໝ່ ຂອງຣັດຄາລິຟໍເນັຍ

ກົມສາທາຣະນະສຸກຂອງຣັດຄາລິຟໍເນັຍ (DHS) ພະແນກບໍຣິ ການ ການພະຍາບານຂອງເດັກ (CMS) ໄດ້ສົ່ງເສີມໃຫ້ມີໂຄງການ ຕຣວດວິຈັຍການໄດ້ຍິນສຽງຂອງທາຣົກເກີດໃໝ່ທົ່ວຣັດ ເພື່ອຊ່ວຍ ຊ ອກທາການເສັຽຫູຂອງບັນດາທາຣົກ. ໂຄງການດັ່ງກ່າວນີ້ ຊ່ວຍ ແນະນຳບັນດາຄອບຄົວໄປສູ່ການບໍຣິການທີ່ເຫມາະສົມ ທີ່ເປັນສິ່ງ ຕ້ອງການໃນການກໍ່ສ້າງຄວາມຊຳນິຊຳນານດ້ານການປະສານພົວ ພັນ.



ບັນດາຄອບຄົວທັງຫລາຍ ທີ່ໄດ້ອອກລູກຢູ່ທີ່ພະແນກບໍຣິກຊ ານແກ່ ເດັກຂອງຣັດຄາລິຟໍເນັຍ (CCS) ໄດ້ເຫັນພ້ອມກັບໂຮງພະຍາບານ ບ່ອນທີ່ຖືກອະນຸຍາດໂດຍ (DHS) ຫລາຍໆແຫ່ງ ເພື່ອເຂົ້າຮ່ວມໃນ ໂຄງການຕຣວດວິຈັຍການໄດ້ຍິນ ສຽງຂອງທາຣົກເກີດໃໝ່ (NHSP) ຂອງຣັດຄາລິຟໍເນັຍນັ້ນ ຈະຖືກສຊ ເນີໃຫ້ເອົາທາຣົກຂອງເຂົາເຈົ້າທຳ ການຕຣວດວິຈັຍການໄດ້ຍິນສຽງ. ບັນດາທາຣົກຜູ້ທີ່ບໍ່ຜ່ານການ ຕຣວດວິຈັຍຢູ່ໃນໂຮງພະຍາບານນັ້ ນກໍຈະຖືກສົ່ງໄປທຳການທົດສອບ ໃໝ່ອີກຫລັງຈາກອອກໂຮງຫມໍ.

DHS ມີການເຊັນສັນຍາກັບສູນປະສານງານການຕຣວດວິຈັຍ ການໄດ້ຍິນສຽງ ເພື່ອທຳງານຮ່ວມກັບບັນດາໂຮງພະຍາບານກ່ຽວກັບ ການກໍ່ສ້າງໂຄງການຕຣວດວິຈັຍການໄດ້ຍິນສຽງ, ດຳເນີນກິຈການ ກ່ຽວກັບການປະກັນທີ່ມີປະສິດທິຜົນ, ແລະເພື່ອຕິດຕາມເບິ່ງບັນດາ ທາຣົກ ຜູ້ທີ່ຕ້ອງການ ການຕຣວດທົດສອບການໄດ້ຍິນສຽງໃໝ່ອີກ.



ທາງໂຄງການຈະໃຊ້ຣະບົບການບໍຣິຫານແບບເກັບກຳຂໍ້ມູນ ເພື່ອ ຊ ່ວຍທຳການຣາຍງານຣາຍລະອຽດກ່ຽວກັບການບໍຣິການຕ່າງໆທີ່ ທາງໂຮງພະຍາບານໄດ້ຈັດແຈງໃຫ້ ແລະໃນການຕິດຕາມເບິ່ງການ ດູແລຂອງທາຣົກຢູ່ໃນໂຄງການ. DHS ຈະເປັນຜູ້ໃຫ້ເຄື່ອງຊອຟທ໌- ແວຣ໌ ເພື່ອໃຫ້ໄດ້ເຂົ້າຮ່ວມວຽກງານກັບໂຮງພະຍາບານ.

## ພວກເຮົາເຮັດການຕຣວດວິຈັຍຄືແນວໃດ?

ການຕຣວດວິຈັຍ ການໄດ້ຍິນສຽງຂອງທາຣົກເກີດໃໝ່ນັ້ນ ເຮັດກ່ອນທີ່ແມ່ ແລະເດັກຈະອອກຈາກໂຮງພະຍາບານ.

ການຕຣວດວິຈັຍ ໃຊ້ເວລາພຽງແຕ່ສອງສາມນາທີ ໃນຂນະ ທີ່ລູກຂອງທ່ານນອນຫລັບຢູ່. ທ່ານຫມໍກໍຈະເປີດສຽງເບົາໆໃສ່ ເຄື່ອງຟັງແບບສຸບໃສ່ຫູ (earphone) ທີ່ເຮັດມາໃຊ້ສຳລັບ ທາຣົກໂດຍສະເພາະ. ພຶດຕິການຂານຕອບຂອງເດັກຂອງ ທ່ານ ຕໍ່ສຽງທົດສອບດັ່ງກ່າວນັ້ນ ຈະຖືກວັດແທກໂດຍເຄື່ອງ ວັດແທກການໄດ້ຍິນສຽງແບບ (OAE) ໂດຍອັຕໂນມັດ ຫລືຈະ ຖືກວັດແທກໂດຍເຄື່ອງວັດແທກການໄດ້ຍິນສຽງແບບ(ABR).

ຣະບົບການຕຣວດວິຈັຍແບບໃຊ້ງ່າຍໆ ໃນປັດຈຸບັນ ແມ່ນ ເປັນເຄື່ອງທີ່ໄວ້ໃຈໄດ້ຫລາຍທີ່ສຸດ. ມີຫນ້ອຍທີ່ສຸດ ທີ່ຈະເຮັດ ໃຫ້ພາດ ໃນການຕຣວດເບິ່ງການເສັຽຫູຂອງທາຣົກ.



## ແມ່ນໃຜເປັນຜູ້ຈ່າຍຄ່າການທົດສອບ ການໄດ້ຍິນສຽງນີ້?

ຄ່າການໃຊ້ຈ່າຍກ່ຽວກັບການທົດສອບການໄດ້ຍິນຂອງທາ ຣົກເຊ ກີດໃໝ່ນັ້ນອາດຈະຖືກປະກັນ ຫລືຄຸ້ມຄອງໂດຍທາງປະ ກັນພັຍສຸຂພາບຂອງທ່ານ. Medi-Cal ຈະຈ່າຍຄ່າການທົດ ສອບ ໃຫ້ແກ່ບັນດາເດັກທາຣົກຜູ້ທີ່ມີສິດທິໄດ້ຮັບ.

## ການໄດ້ຍິນ & ການປາກເວົ້າ ອາຍຸ & ຂັ້ນຕອນ

### ຈາກມື້ເກີດ ເຖິງ ໓ ເດືອນ

- ມິດງຽບ ຕໍ່ສຽງທີ່ຄຸ້ນເຄີຍ
- ມີພຶດຕິການ ຕໍ່ສຽງທີ່ດັງແຮງ, *ຕົກໃຈ, ພັບຕາ, ຫຍຸດດູດ, ຮ້ອງໄຫ້, ຫລືຕື່ນນອນ*
- ເຮັດສຽງເບົາໆເມື່ອຕື່ນນອນ, *ຄວງຄໍ*

### ໓ ເຖິງ ໖ ເດືອນ

- ເຫລືອດຕາ ຫລືງວກຫນ້າໄປຕາມສຽງດັງ, *ສຽງປາກ, ສຽງເຄື່ອງຫລີ້ນຂອງເດັກ, ສຽງຫມາເຫົ່າ*
- ເລີ້ມປາກເວົ້າແບບມີສຽງ, *"ກາ," "ອອູ," "ບະ"* ແລະ*ສຽງພີ, ບີ, ແອັມ*
- ມີພຶດຕິການ ຕໍ່ການປຸ່ນສຽງເວົ້າຂອງທ່ານ

### ໖ ເຖິງ ໙ ເດືອນ

- ມີພຶດຕິການຂານຕອບ ເມື່ອເອີ້ນຊື່ຕົວເອງ ແລະຫລຽວເບິ່ງ ເມື່ອເວລາເອີ້ນ.
- ເຂົ້າໃຈຄຳເວົ້າແບບງ່າຍໆ ເຊັ່ນຄຳວ່າ *"ບໍ່," "ບາຍ-ບາຍ," "ນ້ຳຈຸສ"*
- ເວົ້າແບບຍຽງສາ, *"ດາ ດາ ດາ," "ມາ ມາ ມາ," "ບາ ບາ ບາ"*

### ໙ ເຖິງ ໑໕ ເດືອນ

- ມີພຶດຕິການຂານຕອບ ຕໍ່ທັງສຽງເບົາໆ ຫລືສຽງແຮງໆ
- ຫລຳຄວາມເວົ້າແຕ່ລະຄວາມ ແລະລຽນແບບສຽງສັດ
- ຊີ້ໄປໃສ່ເຄື່ອງຫລິ້ນ ຫລືອາຫານອັນທີ່ມັກ ເມື່ອຖາມເອົາໃຫ້

### ໑໕ ເຖິງ ໑໘ ເດືອນ

- ມັກໃຊ້ ໑໐ ຄຳເວົ້າ ຫລືຫລາຍກວ່ານັ້ນ
- ປະຕິບັດຕາມການບອກໃຫ້ເຮັດແບບງ່າຍ, *"ໄປເອົາຫມາກບານ"*
- ຊີ້ໃສ່ຄົນ, ສ່ວນປະກອບຕ່າງໆຂອງຮ່າງກາຍ ຫລືເຄື່ອງຫລິ້ນ ເມື່ອບອກໃຫ້ເຮັດ
- *"ເຕັ້ນ"* ຕາມສຽງເພງ

### ໑໘ ເຖິງ ໒໔ ເດືອນ

- ມັກໃຊ້ ໒໐ ຄຳເວົ້າ ຫລືຫລາຍກວ່ານັ້ນ
- ຕໍ່ຄຳເວົ້າ ໒ ຄຳ ຫລືຫລາຍກວ່າເຂົ້າໃສ່ກັນ, *"ຢາກໄດ້ ນ້ຳຈຸສຕື່ມ," "ອັນນັ້ນແມ່ນຫຍັງ?"*
- ມັກໃຊ້ ສຽງພະຍັນຊນະຫລາຍອັນໃນເວລາເລີ້ມຄຳເວົ້າ, *ບີ, ຈີ,ແອັມ*
- ຟັງນິທານ ແລະຟັງເພງແບບງ່າຍໆ

### ໒ ເຖິງ ໓ ປີ

- ມັກໃຊ້ປະໂຍກແບບ ໒-໓ ຄຳເວົ້າ
- ເມື່ອອາຍຸ ໒ ປີ, ຄົນສາມາດເຂົ້າໃຈໃນສິ່ງທີ່ເດັກເວົ້າ ເປັນບາງ ຄັ້ງບາງຄາວນັ້ນ ໄດ້ (໒໕% - ໕໐%)
- ເມື່ອອາຍຸ ໓ ປີ, ຄົນສາມາດເຂົ້າໃຈໃນສິ່ງທີ່ເດັກເວົ້າ ເປັນບາງ ຄັ້ງບາງຄາວນັ້ນ ໄດ້ (໕໐% - ໗໕%)
- ປະຕິບັດຕາມຄຳແນະນຳໄດ້ສອງ-ກ້າວ *"ໄປເອົາຫມາກບານ ແລ້ວເອົາໄປວາງລົງໃສ່ໂຕະ)*

***ການທົດສອບການໄດ້ຍິນນັ້ນ ສາມາດທົດສອບເບິ່ງໄດ້ໃນທຸກໆອາຍຸ.***



# ມັນມີເດັກທາຣົກທີ່ເສັຽຫູ ຫລືບໍ່ໄດ້ຍິນສຽງນັ້ນ ຫລາຍເທົ່າໃດ?

ໄດ້ຄົ້ນພົບວ່າ ມີປະມານ ໒-໔ ຄົນໃນຈຳນວນທາຣົກ ໑໐໐໐ ຄົນ ມີການເສັຽຫູໃນຂັ້ນສາຫັດ. ປະມານ ໕໐% ຂອງເດັກທາຣົກຜູ້ທີ່ເສັຽ ຫູ ບໍ່ເຮັດໃຫ້ເຫັນພຶຣຸດ ຫລືພາກສ່ວນຕ່າງໆຂອງການ ສ່ຽງ ຄືບໍ່ມີການເຈັບປ່ວຍໜັກ ຫລືບໍ່ມີປະວັດກ່ຽວກັບການເປັນຫູໜວກຂອງ ຄົນໃນຄອບຄົວ. ທາຣົກບາງຄົນກໍອາດຈະເກີດ ການເສັຽຫູໃນເວລາ ຕໍ່ມາ ຈາກການມັກເປັນຫູໜວງເລື້ອຍໆ, ເກີດແຜ່ນຫຸ້ມສະມອງ, ເປັນບາດແຜ ໃນຫົວ ຫລືເກີດສະພາບ ກ່ຽວກັບສຸຂພາບອື່ນໆ. ບາງ ຄັ້ງກໍບໍ່ຮູ້ໄດ້ເລີຍວ່າ ແມ່ນຫຍັງທີ່ ເປັນສາເຫດເຮັດໃຫ້ເກີດການເສັຽຫູ ຂອງທາຣົກ.

# ເປັນຫຍັງຈຶ່ງທົດສອບເບິ່ງທາຣົກ?

ການເສັຽຫູນັ້ນ ບໍ່ສາມາດແນມເຫັນໄດ້. ໃນປັດຈຸບັນ, ເຄື່ອງເທັກ ໂນໂລຈີເຮັດໃຫ້ເປັນໄປໄດ້ໃນການພົບເຫັນການເສັຽຫູແຕ່ຫົວທີໃນຊີ ວິດຂອງທາຣົກ.

ເດືອນ ແລະປີທຳອິດໃນຊີວິດຂອງເດັກແມ່ນເປັນສິ່ງສຳຄັນຫລາຍສຳລັບການກໍ່ສ້າງຄວາມຊຳນານ ຫລືປະສົບປະການກ່ຽວກັບການປະສານພົວພັນ. ເດັກຜູ້ທີ່ເສັຽຫູ ຫລືຫູໜວກນັ້ນ ອາດຈະມີຄວາມລຳບາກໃນການກໍ່ສ້າງຄວາມຊຳນານດ້ານພາສາ ຫລືອາດຈະຮຽນບໍ່ເກັ່ງຢູ່ໃນໂຮງຮຽນ. ການພົບເຫັນການເສັຽຫູຂອງເດັກໄວໄດ້ເທົ່າໃດ ກໍຍິ່ງເຮັດໃຫ້ການຈັດຫາການຊ່ວຍເຫລືອໄດ້ໄວຂຶ້ນເທົ່ານັ້ນ. ດ້ວຍເຫດນີ້ ມັນຈຶ່ງເປັນສິ່ງທີ່ສຳຄັນ ຕໍ່ການພິສູດເບິ່ງການເສັຽຫູແຕ່ຫົວທີແລະຈັດຫາການບໍຣິການ ແບບພິເສດໃຫ້ແກ່ທາຣົກ ແລະຄອບຄົວ.

ວິທະຍາການກ່ຽວກັບໝໍປົວເດັກອະເມຣິກັນ ແລະອົງການຈັດຕັ້ງ ຊ່ວຊານອື່ນໆ ໄດ້ແນະນຳໃຫ້ເຮັດການຕຣວດວິຈັຍການໄດ້ຍິນສຽງ ໃຫ້ແກ່ທາຣົກເຊີດໃຫມ່ໝົດທຸກຄົນ ແລະກໍແນະນຳໃຫ້ສັງເກດເບິ່ງ ການໄດ້ຍິນຂອງເດັກຕລອດຊຸມປີໃນເບື້ອງຕົ້ນນັ້ນຢ່າງໃກ້ຊິດ.

# ຄ່າການໃຊ້ຈ່າຍກ່ຽວກັບການຕຣວດວິຈັຍ ການໄດ້ຍິນສຽງຂອງເດັກເກີດໃໝ່

ຄ່າການໃຊ້ຈ່າຍກ່ຽວກັບການຕຣວດວິຈັຍການໄດ້ຍິນສຽງຂອງທາຣົກເກີດໃຫມ່ນັ້ນ ອາດຈະຖືກຄຸ້ມຄອງໂດຍປະກັນສຸຂພາບ. Medi-Cal ຈະຈ່າຍໃຫ້ແກ່ການຕຣວດວິຈັຍສຳລັບທາຣົກຜູ້ມີສິດໄດ້ຮັບ.



## ໂຄງການຕຣວດວິຈັຍການໄດ້ຍິນສຽງ ຂອງເດັກເກີດໃໝ່ຂອງຣັດຄາລີຟໍເນັຍ

ຈຸດຄາດໝາຍຂອງໂຄງການຕຣວດວິຈັຍການໄດ້ຍິນຂອງເດັກເກີດໃຫມ່ຂອງຣັດຄາລີຟໍເນັຍ ແມ່ນເພື່ອພິສູດເບິ່ງບັນດາທາຣົກທີ່ຫູບໍ່ໄດ້ຍິນ ແລະເພື່ອຕໍ່ພວກເຂົາເຈົ້າໄປຫາການບໍຣິການຕ່າງໆ ພາຍໃນອາຍຸຫົກເດືອນ. ໂຄງການດັ່ງກ່າວນີ້ ມີສູນປະສານງານເພື່ອຕຣວດວິຈັຍການໄດ້ຍິນສຽງຢູ່ຫລາຍແຫ່ງ ທີ່ເຮັດວຽກຮ່ວມກັບພວກໝໍຮັກສາດູແລສຸຂພາບຂອງຄອບຄົວ ແລະຮ່ວມກັບໂຮງພະຍາບານຕ່າງໆ ເພື່ອໃຫ້ແນ່ນອນວ່າ ພວກເດັກນ້ອຍໄດ້ຮັບການບໍຣິການຕ່າງໆທີ່ຕ້ອງການ.

ໂຄງການຕຣວດວິຈັຍການໄດ້ຍິນສຽງຂອງເດັກເກີດໃຫມ່ ເກັບກຳເອົາຣາຍລະອຽດຕ່າງໆກ່ຽວກັບການຕຣວດວິຈັຍການຟັງສຽງຂອງເດັກຂອງທ່ານຕາມກົດໝາຍກ່ຽວກັບການຮັກສາສຸຂພາບ ແລະຄວາມປອດພັຍມາຕຣາ ໑໒໔໑໑໙. ສູນປະສານງານເພື່ອຕຣວດວິຈັຍການໄດ້ຍິນສຽງ ອາດຈະໃຊ້ຣາຍຣະອຽດດັ່ງກ່າວນີ້ ເພື່ອຊ່ວຍທ່ານ ແລະເດັກຂອງທ່ານ ໃຫ້ໄດ້ຮັບການບໍຣິການຕ່າງໆ ທີ່ທ່ານອາດຈະຕ້ອງການ. ມັນເປັນໄປໄດ້ ທີ່ທາງສູນປະສານງານ ເພື່ອຕຣວດວິຈັຍການໄດ້ຍິນສຽງອາດຈະຕິດຕໍ່ຫາທ່ານກ່ຽວກັບການບໍຣິການອັນຕໍ່ໄປຕ່າງໆ.

**ຕ້ອງການຣາຍລະອຽດເພີ້ມເຕີມ**
**ກ່ຽວກັບໂຄງການຕຣວດວິຈັຍການໄດ້ຍິນສຽງ,**
**ໃຫ້ໂທແບບບໍ່ໄດ້ເສັຽຄ່າໄປຍັງ**
**1-877-388-5301**

Children's Medical Services
714 P Street
Sacramento, CA 95814

Gray Davis
ຜູ້ວ່າຣາຊການຣັດ
State of California

Grantland Johnson
ເລຂາທິການ
Health and Human Services Agency

Diana M. Bonta', R.N., Dr. P.H.
ຜູ້ອຳນວຍການ
Department of Health Services

ຮູບຂອງເດັກເກີດໃຫມ່ນັ້ນໄດ້ຖ່າຍຢູ່ທີ່ໂຮງພະຍາບານ Sutter Memorial Hospital, ເມືອງສັກຣາເມັນໂຕ

CMS Contract 98-16110

Publication Number 815

Rev. 3/2000 Lao